# ປົດອອກຂ່າວ

**<u>ກິດຈະກໍາຕອບໂຕ້ໄພນໍ້າຖ້ວມຖືກທົບທວນຄືນຢູ່ແຂວງຄໍາມ່ວນ</u>**

**ທີ່ທ່າແຂກ, 21-22 ມັງກອນ 2018** – ຄະນະຜູ້ແທນ ເຈົ້າໜ້າທີ່ລັດຖະບານ, ເອກອັກຄະລັດຖະທູດ ແລະ ບັນດາຜູ້ຕາງໜ້າອົງການສະຫະປະຊາຊາດ ໄດ້ເດີນທາງໄປແຂວງຄໍາມ່ວນມື້ນີ້ ເພື່ອຕິດຕາມຄວາມຄືບໜ້າໃນການຈັດຕັ້ງປະຕິບັດໂຄງການຊ່ວຍເຫຼືອລ້າສຸກເສີນທີ່ທາງ ສປປ ລາວ ໄດ້ຮັບຈາກກອງທຶນຕອບໂຕ້ສຸກເສີນສ່ວນກາງຂອງສະປະຊາຊາດ ໃນເດືອນຕຸລາປີກາຍນີ້.

ເງິນຊ່ວຍເຫຼືອຈໍານວນ 3.5 ລ້ານໂດລາສະຫະລັດ ໄດ້ຖືກມອບໃຫ້ແກ່ ສປປ ລາວ ເພື່ອດໍາເນີນການສະໜອງການຊ່ວຍເຫຼືອດ້ານມະນຸດສະທໍາແກ່ຜູ້ປະສົບໄພນໍ້າຖ້ວມໃຫຍ່ຄັ້ງປະຫວັດສາດທີ່ແຂວງຄໍາມ່ວນໃນປີກາຍນີ້. ການຈັດຕັ້ງປະຕິບັດໂຄງການຊ່ວຍເຫຼືອດັ່ງກ່າວ ປະຈຸບັນແມ່ນດໍາເນີນມາຮອດເຄິ່ງທາງແລ້ວ ແລະ ຈຸດປະສົງຂອງຄະນະຜູ້ແທນແມ່ນເພື່ອປະເມີນຜົນໄດ້ຮັບແຕ່ຕົ້ນຮອດປະຈຸບັນ. ແຜນເຄື່ອນໄຫວຂອງຄະນະຈະດໍາເນີນເປັນເວລາສອງມື້ ເຊິ່ງຈະໄດ້ປະຊຸມກັບເຈົ້າໜ້າທີ່ລັດຖະບານໃນທ້ອງຖິ່ນ ເຊັ່ນດຽວກັບບັນດານາຍບ້ານ ແລະ ປະຊາຊົນໃນບ້ານຕ່າງໆທີ່ໄດ້ຮັບຜົນປະໂຫຍດຈາກໂຄງການ.

ກິດຈະກໍາຕອບໂຕ້ໄພນໍ້າຖ້ວມໄດ້ຮັບການປະສານງານໂດຍກະຊວງແຮງງານ ແລະ ສະຫວັດດີການສັງຄົມ ເຊິ່ງໄດ້ຮັບການສະໜັບສະໜຸນຈາກ 4 ອົງການໃນເຄືອຂ່າຍ ສປຊ ເຊັ່ນ ອົງການອາຫານ ແລະ ການກະເສດແຫ່ງສະຫະປະຊາຊາດ (FAO), ອົງການສະຫະປະຊາຊາດ ເພື່ອການພັດທະນາ (UNDP), ອົງການອາຫານໂລກ (WFP) ແລະ ອົງການອະນາໄມໂລກ (WHO). ຮອດປະຈຸບັນ, ກິດຈະກໍາໄດ້ສຸມໃສ່ ຮັບປະກັນຄວາມໝັ້ນຄົງດ້ານສະບຽງອາຫານໃຫ້ແກ່ປະຊາຊົນທີ່ໄດ້ຮັບຜົນກະທົບ, ແກ້ໄຂການຂາດສານອາຫານ, ຊ່ວຍເລື່ອງການເຮັດວຽກຂອງໂຮງໝໍ ແລະ ສຸກສາລາໃນລະຫວ່າງການລະບາດຂອງພະຍາດທີ່ເກີດຈາກການຂາດທາດວິຕາມິນ ບີ 1 ແລະ ປັບປຸງການດໍາລົງຊີວິດ ຂອງຜູ້ທີ່ສູນເສຍຊັບສິນເນື່ອງຈາກນໍ້າຖ້ວມ.

ຕົວຢ່າງ, FAO ໄດ້ຊ່ວຍຊາວບ້ານປູກເຂົ້າ ແລະ ພືດຜັກ ຫຼັງຈາກນໍ້າຖ້ວມໄດ້ທໍາລາຍຜົນຜະລິດຂອງພວກເຂົາເຈົ້າ. WFP ໄດ້ແຈກຢາຍເງິນສົດໃຫ້ແກ່ຄົວເຮືອນຫຼາຍກວ່າ 6,000 ຄົວເຮືອນ ເພື່ອຊື້ອາຫານໃນຊ່ວງລໍຖ້າຜົນຜະລິດຂອງພວກເຂົາ ເຊິ່ງຍັງເປັນການເຮັດໃຫ້ຕະຫຼາດໃນທ້ອງຖິ່ນມີການຊື້-ຂາຍເປັນປົກກະຕິ. UNDP ໄດ້ສະໜອງໂອກາດໃນການເຮັດວຽກຊົ່ວຄາວແກ່ຜູ້ປະສົບໄພ ໂດຍການທົດແທນເງິນໃຫ້ພວກເຂົາ ທີ່ໄດ້ສ້ອມແປງພື້ນຖານໂຄງລ່າງທີ່ໄດ້ຮັບຄວາມເສຍຫາຍຈາກນໍ້າຖ້ວມ. WHO ໄດ້ປ່ຽນອຸປະກອນພາຍໃນໂຮງໝໍເມືອງທີ່ໄດ້ຮັບຄວາມເສຍຫາຍ ແລະ ແຈກຢາຍວິຕາມິນ ບີ ເພື່ອຈໍາກັດການແຜ່ລະບາດຂອງພະຍາດທີ່ເກີດຈາກການຂາດທາດວິຕາມິນບີ ເຊິ່ງເກີດຂຶ້ນຫຼັງຈາກທີ່ເກີດໄພພິບັດ.

ໃນກອງປະຊຸມຮ່ວມກັບທ່ານ ຄຳສີ ອຸທິວົງ, ຮອງເຈົ້າແຂວງ ແຂວງຄຳມ່ວນ, ທ່ານ ນາງ ຄາຣີນາ ອິມໂມເນັນ, ຜູ້ປະສານງານອົງການສະຫະປະຊາຊາດ ປະຈຳ ສປປ ລາວ ໄດ້ກ່າວມີຄຳເຫັນວ່າ: "ປະຊາຊົນທີ່ໄດ້ຮັບຄວາມເດືອດຮ້ອນຈາກໄພນ້ຳຖ້ວມ ໄດ້ຮັບການຊ່ວຍເຫຼືອຢ່າງວ່ອງໄວ ຖືວ່າເປັນສິ່ງຄວາມສຳຄັນຫຼາຍ. ພວກເຮົາຮັບຮູ້ການຕອບສະໜອງທີ່ທັນການຂອງກະຊວງແຮງງານ ແລະ ສະຫວັດດີການສັງຄົມ ຕໍ່ກັບຄວາມຕ້ອງການອັນຮີບດ່ວນ ແລະ ຫຼາກຫຼາຍຂອງປະຊາຊົນແຂວງຄຳມ່ວນ ແລະ ຫວັງວ່າກິດຈະກຳຈະສຳເລັດພາຍໃຕ້ການຊ່ວຍເຫຼືອຂອງກອງທຶນຕອບໂຕສຸກເສີນຂອງສະຫະປະຊາຊາດ."

ທ່ານ ຄຳສີ ອຸທິວົງ ໄດ້ເນັ້ນໜັກຄວາມສຳຄັນຂອງການຊ່ວຍເຫຼືອຂອງຕ່າງປະເທດໃນການຟື້ນຟູຫຼັງເກີດໄພພິບັດທີ່ເກີດໃນທົ່ວ ສປປ ລາວ ເມື່ອບໍ່ດົນມານີ້: "ໂດຍປາສະຈາກການຊ່ວຍເຫຼືອຂອງລັດຖະບານ ແລະ ອົງການຈັດຕັ້ງຈາກຕ່າງປະເທດ, ພວກເຮົາຈະບໍ່ສາມາດຊ່ວຍເຫຼືອປະຊາຊົນແຂວງຄຳມ່ວນໄດ້ຢ່າງມີປະສິດທິພາບແບບນີ້. ພວກເຮົາຫວັງວ່າ ບັນດາແຂວງອື່ນໆທີ່ຕ້ອງການຄວາມຊ່ວຍເຫຼືອຈະໄດ້ຮັບສິນໃຈຈາກຕ່າງປະເທດເຊັ່ນດຽວກັນ."

ແຜນເຄື່ອນໄຫວຂອງຄະນະ ແມ່ນປະກອບມີການໄປຢ້ຽມຢາມພື້ນທີ່ໂຄງການຢູ່ເມືອງຫີນບູນ. ນອກຈາກນີ້, ບັນດາຜູ້ຕາງໜ້າຈາກກະຊວງການຕ່າງປະເທດ, ກະຊວງກະສິກຳ ແລະ ປ່າໄມ້, ກະຊວງແຜນການ ແລະ ການລົງທຶນ ແລະ ກະຊວງສາທາລະນະສຸກ, ເອກອັກຄະລັດຖະທູດສາທາລະນະລັດເກົາຫຼີ ແລະ ສະຫະພາບເອີຣົບປະຈຳ ສປປ ລາວ ແລະ ຫົວໜ້າສະຖານທູດລາດຊະອານາຈັກອັງກິດກໍໄດ້ເຂົ້າຮ່ວມໃນຄະນະເຊັ່ນດຽວກັນ.

**ສຳລັບຂໍ້ມູນເພີ່ມຕື່ມ, ກະລຸນາຕິດຕໍ່:**

ທ່ານ ນາງ ອິດິໂກ ຮາໂມສ-ໂຊໂລ, ຜູ້ຊ່ຽວຊານດ້ານການສື່ສານ, ອົງການສະຫະປະຊາຊາດ ປະຈຳ ສປປ ລາວ, ໂທ +856 021 267 778, ມືຖື: +856 020 7717 7913 ອີເມວ: ildikohamos@oneun.org